CHI Franciscan
Rehabilitation Hospital



# Catholic Health Initiatives
# ນະໂຍບາຍຊ່ວຍເຫຼືອດ້ານການເງິນ

ຢູ່ທີ່ໂຄງການລິເລີ່ມສຸຂະພາບທີ່ດີຂອງຄາໂຕລິກ (CHI), ການສ້າງຊຸມຊົນທີ່ມີສຸຂະພາບດີຂຶ້ນ ແລະ ໃຫ້ການສະໜັບສະໜູນຊ່ວຍເຫຼືອຄົນທຸກຍາກ ແລະ ດ້ອຍໂອກາດແມ່ນພາລະກິດ ແລະ ຄວາມມັກຂອງພວກເຮົາ. ວິທີໜຶ່ງທີ່ພວກເຮົາສາມາດເຮັດອັນນີ້ໄດ້ແມ່ນຜ່ານໂຄງການຊ່ວຍເຫຼືອດ້ານການເງິນ CHI ຂອງພວກເຮົາ, ບ່ອນທີ່ພວກເຮົາຫຼຸດຄ່າໃຊ້ຈ່າຍໃນບິນທາງການແພດຂອງຄົນເຈັບອີງຕາມຄວາມຈຳເປັນທາງດ້ານການເງິນຂອງພວກເຂົາ.

## ພວກເຮົາສາມາດຊ່ວຍໄດ້ແນວໃດ

ພວກເຮົາມີການເບິ່ງແຍງດູແລສຸກເສີນ ຫຼື ການບໍລິການທີ່ມີຄວາມຈຳເປັນທາງການແພດອື່ນບໍ່ເສຍຄ່າໃຫ້ແກ່ຄົນເຈັບຂອງພວກເຮົາຜູ້ທີ່ມີ:

- ລາຍຮັບຄອບຄົວປະຈຳປີໜ້ອຍກວ່າ ຫຼື ເທົ່າກັບ 300% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງຕາມທີ່ໄດ້ກຳນົດໄວ້ໃນບົດແນະນຳທີ່ໄດ້ຕີພິມເຜີຍແຜ່ປະຈຳປີໂດຍທາງ U.S. Department of Health and Human Services (FPL, ກະຊວງສາທາລະນະສຸກ ແລະ ບໍລິການມະນຸດຂອງສະຫະລັດ). ລິ້ງໄປຍັງບົດແນະນຳ: https://aspe.hhs.gov/poverty-guidelines

- ໄດ້ຮ່ວມມືກັບຄວາມພະຍາຍາມເພື່ອໃຊ້ທາງເລືອກການຊຳລະອື່ນທັງໝົດນັ້ນບໜົດໄປ; ແລະ

- ໄດ້ສົ່ງໃບຄຳຮ້ອງຂໍໂຄງການ ແລະ ໃຫ້ເອກະສານສະໜັບສະໜູນເພື່ອກວດສອບລາຍໄດ້.

ໝາຍເຫດ: ໃນບາງກໍລະນີ, ຄົນເຈັບອາດຈະໄດ້ຮັບການຊ່ວຍເຫຼືອດ້ານການເງິນໂດຍບໍ່ຕ້ອງມີໃບຄຳຮ້ອງເປັນທາງການ. ລາຍລະອຽດແມ່ນໄດ້ກຳນົດໄວ້ໃນນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ.

## ຄ່າທຳນຽມທີ່ເກັບນຳຄົນເຈັບທີ່ມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນ

ຄົນເຈັບທີ່ມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນຈະບໍ່ຄາດໝາຍໃຫ້ຈ່າຍເພີ່ມສຳລັບການເບິ່ງແຍງດູແລສຸກເສີນ ຫຼື ການເບິ່ງແຍງດູແລທາງການແພດທີ່ຈຳເປັນອື່ນໆ ເກີນໄປກວ່າຈຳນວນທີ່ໄດ້ສົ່ງໃບບິນທົ່ວໄປໃຫ້ກັບຜູ້ທີ່ມີປະກັນໄພຄຸ້ມຄອງການເບິ່ງແຍງດູແລດັ່ງກ່າວ.

## ພ້ອມທີ່ຈະດຳເນີນຂັ້ນຕອນຕໍ່ໄປແລ້ວບໍ່?

ປະກອບໃບຄຳຮ້ອງໃຫ້ຄົບຖ້ວນ ແລະ ສົ່ງໄປຫາ Main Admitting (ຝ່າຍຕ້ອນຮັບໃຫຍ່).

ນະໂຍບາຍຊ່ວຍເຫຼືອດ້ານການເງິນ, ໃບຄຳຮ້ອງ ແລະ ໃບສັງລວມນີ້ມີຢູ່ທີ່ http://www.chifranciscan.org/financialassistance, ເປັນພາສາອັງກິດ ແລະ ສະເປນ ແລະ ພາສາອື່ນເຈັດພາສາ. ເພື່ອຮັບເອົາສຳເນົາເອກະສານເຫຼົ່ານີ້ບໍ່ເສຍຄ່າໂດຍທາງໄປສະນີ ຫຼື ໄປຮັບເອົາເອງ, ເພື່ອຮັບເອົາການຊ່ວຍເຫຼືອໃນການປະກອບໃບຄຳຮ້ອງໃຫ້ສຳເລັດ ຫຼື ເພື່ອຂໍເອົາສຳເນົາເອກະສານເຫຼົ່ານີ້ໃຫ້ແປເປັນພາສາອື່ນທີ່ບໍ່ໄດ້ອະທິບາຍໄວ້ໂດຍບໍ່ເສຍຄ່າ, ກະລຸນາຕິດຕໍ່:

CHI Franciscan Rehabilitation
815 South Vassault Street
Tacoma, WA 98465
Phone: 253-444-3320
Fax: 253-444-3330

ເອກະສານເຫຼົ່ານີ້ຍັງມີໃຫ້ຢູ່ໃນ Emergency Room (ຫ້ອງສຸກເສີນ) ແລະ Main Admitting (ບ່ອນຕ້ອນຮັບໃຫຍ່) ຂອງໂຮງໝໍນຳອີກ.